# ຂໍ້ມູນກ່ຽວກັບດ່ານສາກົນ ຢູ່ ສປປ ລາວ

**I. ດ່ານສາກົນລະຫວ່າງ ລາວ-ຈີນ**

1). ດ່ານສາກົນ ລານຕຸຍ ແຂວງຜົ້ງສາລີ - ເມືອງຄໍາ(ເມືອງຄັງ) ແຂວງຢຸນນານ (ບໍ່ມີວີຊາກັບດ່ານ)

2). ດ່ານສາກົນ ບໍ່ເຕັນ ແຂວງຫຼວງນໍ້າທາ - ບໍ່ຫານ ແຂວງຢຸນນານ **(ມີວີຊາກັບດ່ານ + e-Visa)**

3). ດ່ານສາກົນທາງລົດໄຟລາວ-ຈີນ, ບໍ່ເຕັນ ແຂວງຫຼວງນໍ້ທາ - ບໍ່ຫານ ແຂວງຢຸນນານ **(ບໍ່ມີວີຊາກັບດ່ານ, ມີ e-Visa)**

**II. ດ່ານສາກົນລະຫວ່າງ ລາວ-ມຽນມາ**

1). ດ່ານສາກົນ ບ້ານເມືອງມອມ ແຂວງບໍ່ແກ້ວ - ວັງປຸ່ງ ແຂວງທ່າຂີ້ເຫຼັກ (ບໍ່ມີວີຊາກັບດ່ານ)

**III. ດ່ານສາກົນລະຫວ່າງ ລາວ-ໄທ**

1). ດ່ານສາກົນ ສາມຫລ່ຽມຄໍາ ແຂວງບໍ່ແກ້ວ - ສາມຫລ່ຽມຄໍາ ຈັງຫວັດຊຽງຣາຍ (ມີວີຊາກັບດ່ານ)

2). ດ່ານສາກົນ ຂົວມິດຕະພາບລາວ-ໄທ 4 ແຂວງບໍ່ແກ້ວ - ຈັງຫວັດຊຽງຣາຍ **(ມີວີຊາກັບດ່ານ + e-Visa)**

3). ດ່ານສາກົນ ນໍ້າເງິນ ແຂວງໄຊຍະບູລີ - ຫ້ວຍໂກນ ຈັງຫວັດນ່ານ (ບໍ່ມີວີຊາກັບດ່ານ )

4). ດ່ານສາກົນ ຂົວມິດຕະພາບນໍ້າເຫືອງ ແຂວງໄຊຍະບູລີ - ຈັງຫວັດເລີຍ (ບໍ່ມີວີຊາກັບດ່ານ)

5). ດ່ານສາກົນ ພູດູ່ ແຂວງໄຊຍະບູລີ - ພູດູ່ ຈັງຫວັດອຸດຕຣະດິດ (ບໍ່ມີວີຊາກັບດ່ານ)

6). ດ່ານສາກົນ ຂົວມິດຕະພາບລາວ - ໄທ 1 (ວຽງຈັນ-ໜອງຄາຍ) **(ມີວີຊາກັບດ່ານ + e-Visa)**

7). ດ່ານສາກົນ ທ່າເຮືອປາກຊັນ ແຂວງບໍລິຄໍາໄຊ - ຈັງຫວັດບຶງການ (ບໍ່ມີວີຊາກັບດ່ານ)

8). ດ່ານສາກົນ ຂົວມິດຕະພາບລາວ - ໄທ 3 ທ່າແຂກ ແຂວງຄໍາມ່ວນ - ນະຄອນພະນົມ (ມີວີຊາກັບດ່ານ)

9). ດ່ານສາກົນ ຂົວມິດຕະພາບລາວ - ໄທ 2 ແຂວງສະຫວັນນະເຂດ - ຈັງຫວັດມຸກດາຫານ **(ມີວີຊາກັບດ່ານ + e-Visa)**

10). ດ່ານສາກົນ ວັງເຕົ່າ ແຂວງຈໍາປາສັກ - ຊ່ອງເມັກ ຈັງຫວັດອຸບົນຣາຊະທານີ (ມີວີຊາກັບດ່ານ)

11). ດ່ານສາກົນ ປາງມອນ ແຂວງໄຊຍະບູລີ - ບ້ານຮອກ ຈັງຫວັດພະເຢົາ (ບໍ່ມີວີຊາກັບດ່ານ)

12). ດ່ານສາກົນ ທ່າບົກທ່ານາແລ້ງ (ນະຄອນຫລວງວຽງຈັນ) (ບໍ່ມີວີຊາກັບດ່ານ)

(ສໍາລັບດ່ານນີ້ ສາມາດເຂົ້າ-ອອກໄດ້ສະເພາະແຕ່ລົດບັນທຸກ ແລະ ຜູ້ຂັບຂີ່ລົດບັນທຸກເທົ່ານັ້ນ)

13). ດ່ານສາກົນ ສະຖານີລົດໄຟຄໍາສະຫວາດ (ນະຄອນຫລວງວຽງຈັນ) (ມີວີຊາກັບດ່ານ)

14). ດ່ານສາກົນ ບ້ານວັງມົນ ແຂວງວຽງຈັນ - ບ້ານໂຄກໄຜ່ ຈັງຫວັດເລີຍ (ບໍ່ມີວີຊາກັບດ່ານ)

15). ດ່ານສາກົນ ປາກຕາພານ ແຂວງສາລະວັນ - ບ້ານປາກແຊງ ຈັງຫວັດອຸບົນຣາຊະທານີ (ບໍ່ມີວີຊາກັບດ່ານ)

**IV. ດ່ານສາກົນລະຫວ່າງ ລາວ-ຫວຽດນາມ**

1). ດ່ານສາກົນ ປາງຫົກ ແຂວງຜົ້ງສາລີ - ໄຕຈາງ ແຂວງດຽນບຽນ (ບໍ່ມີວີຊາກັບດ່ານ)

2). ດ່ານສາກົນ ນໍ້າໂສຍ ແຂວງຫົວພັນ - ນາແມວ ແຂວງແທ່ງຮວາ (ບໍ່ມີວີຊາກັບດ່ານ)

3. ດ່ານສາກົນ ນໍ້າກັ່ນ ແຂວງຊຽງຂວາງ - ນໍ້າກັ່ນ ແຂວງເຫງະອານ (ບໍ່ມີວີຊາກັບດ່ານ)

4. ດ່ານສາກົນ ນໍ້າພາວ ແຂວງບໍລິຄໍາໄຊ - ເກົາແຈວ ແຂວງຮາຕິງ (ບໍ່ມີວີຊາກັບດ່ານ)

5). ດ່ານສາກົນ ນາເພົ້າ ແຂວງຄໍາມ່ວນ - ຈະລໍ ແຂວງກວາງບິງ (ບໍ່ມີວີຊາກັບດ່ານ)

6). ດ່ານສາກົນ ແດນສະຫວັນ ແຂວງສະຫວັນນະເຂດ - ລາວບາວ ແຂວງກວາງຈິ (ມີວີຊາກັບດ່ານ)

7). ດ່ານສາກົນ ລະໄລ ແຂວງສາລະວັນ - ລະໄລ ແຂວງກວາງຈິ (ບໍ່ມີວີຊາກັບດ່ານ)

8). ດ່ານສາກົນ ພູເກືອ ແຂວງອັດຕະປື - ເບີອີ ແຂວງກອນຕູມ (ບໍ່ມີວີຊາກັບດ່ານ)

9). ດ່ານສາກົນ ດາກຕະອອກ ແຂວງເຊກອງ - ນ້ຳມຢາງ ແຂວງກວາງນາມ (ບໍ່ມີວີຊາກັບດ່ານ)

**V. ດ່ານສາກົນລະຫວ່າງ ລາວ-ກໍາປູເຈຍ**

1). ດ່ານສາກົນ ໜອງນົກຂຽນ ແຂວງຈໍາປາສັກ - ຕຣາປຽງກຣຽນ ແຂວງຊຽງແຕງ (ມີວີຊາກັບດ່ານ)

**VI. ດ່ານສາກົນສະໜາມບິນ**

1). ດ່ານສາກົນ ສະໜາມບິນຫລວງພະບາງ (ແຂວງຫລວງພະບາງ) **(ມີວີຊາກັບດ່ານ + e-Visa)**

2). ດ່ານສາກົນ ສະໜາມບິນວັດໄຕ (ນະຄອນຫລວງວຽງຈັນ) **(ມີວີຊາກັບດ່ານ + e-Visa)**

3). ດ່ານສາກົນ ສະໜາມບິນສະຫວັນນະເຂດ (ແຂວງສະຫວັນນະເຂດ) (ມີວີຊາກັບດ່ານ)

4). ດ່ານສາກົນ ສະໜາມບິນປາກເຊ (ແຂວງຈໍາປາສັກ) **(ມີວີຊາກັບດ່ານ + e-Visa)**

➢ **ລວມດ່ານສາກົນທັງໝົດມີ 34 ດ່ານ:**

- ດ່ານສາກົນທີ່ມີວີຊາກັບດ່ານ: 14 ດ່ານ
- ດ່ານສາກົນທີ່ບໍ່ມີວີຊາກັບດ່ານ: 19 ດ່ານ
- ດ່ານສາກົນທີ່ຕິດກັບ ສປ ຈີນ: 03 ດ່ານ
- ດ່ານສາກົນທີ່ຕິດກັບ ມຽນມາ: 01 ດ່ານ
- ດ່ານສາກົນທີ່ຕິດກັບ ສສ ຫວຽດນາມ: 09 ດ່ານ
- ດ່ານສາກົນທີ່ຕິດກັບ ໄທ: 16 ດ່ານ
- ດ່ານສາກົນທີ່ຕິດກັບ ກໍາປູເຈຍ: 01 ດ່ານ
- ດ່ານສະໜາມບິນສາກົນ: 04 ດ່ານ

**ຂໍ້ມູນເພີ້ມເຕີມ:**

- **ດ່ານສາກົນ:** ແມ່ນສາມາດເຂົ້າ-ອອກໄດ້ທັງພົນລະເມືອງລາວ ແລະ ພົນລະເມືອງຕ່າງປະເທດ.
- **ດ່ານທ້ອງຖິ່ນ:** ແມ່ນສາມາດເຂົ້າ-ອອກໄດ້ສະເພາະພົນລະເມືອງຂອງສອງປະເທດທີ່ມີຊາຍແດນຕິດຈອດກັນ ຕາມການຕົກລົງຂອງສອງຝ່ານ.
- **ດ່ານປະເພນີ:** ແມ່ນສາມາດເຂົ້າ-ອອກໄດ້ສະເພາະພົນລະເມືອງຂອງສອງປະເທດ ທີ່ອາໃສຢູ່ທ້ອງຖິ່ນລະຫວ່າງບ້ານຕໍ່ບ້ານ ຫຼື ເມືອງຕໍ່ເມືອງຕາມການຕົກລົງຂອງສອງຝ່າຍ.

ນະຄອນຫຼວງວຽງຈັນ, ວັນທີ 31 ຕຸລາ 2024

**ກົມກົງສຸນ ກະຊວງການຕ່າງປະເທດ**